Lao

# ການຍື່ນຄຳຮ້ອງຮຽນຕໍ່ ອອມບຸດສແມນ

COMMONWEALTH
OMBUDSMAN

**ອອມບຸດສແມນ (Ombudsman) ຂອງ ລັດຖະບານກາງ ສອບສວນ ເລື່ອງ ການຮ້ອງຮຽນຕ່າງໆກ່ຽວກັບວິທີ ການບໍລິຫານຂອງຫ້ອງການລັດຖະບານ ອອສເຕຣເລັຍ ແລະ ບັນດາອົງກອນເອກກະຊົນທີ່ໄດ້ຮັບອະນຸຍາດ.**

## ອອມບຸດສແມນ ຈະຊ່ວຍທ່ານໄດ້ຢ່າງໃດ

ຖ້າທ່ານຄິດວ່າທ່ານໄດ້ຮັບການປະຕິບັດຕໍ່ຕົວທ່ານ ຢ່າງບໍ່ຍຸດຕິທັມ ທ່ານສາມາດຮ້ອງຮຽນໄປຫາ ຫ້ອງການຂອງອອມບຸດສແມນ.

ປະເພດຂອງການຮ້ອງຮຽນທີ່ພວກເຮົາສອບສວນເບິ່ງກວມເອົາ:

> **ຫ້ອງການຕ່າງໆ** – ມີໜ້າທີ່ຮັບຜິດຊອບໃນບໍລິການ ຕ່າງໆ ເຊັ່ນ ການຈ່າຍຄ່າສວັດດີການ ແລະ ຄ່າລ້ຽງດູເດັກ, ບັນດາບໍລິການກ່ຽວກັບສຸຂພາບ ແລະ ການຂົນສົ່ງຂອງລັດຖະບານກາງ.

> **ບັນດາບໍລິການຕ່າງໆ** – ທີ່ໃຫ້ບໍລິການໂດຍຜູ້ຮັບເໝົາ ເອກກະຊົນສ່ວນຫຼາຍໃຫ້ລັດຖະບານອອສເຕຣເລັຍ

> **ເສຣີພາບຂອງຂໍ້ມູນ (FOI)** - ຮວມເຖິງການຊັກຊ້າໃນ ການດຳເນີນການ ການຮ້ອງຂໍເອົາ FOI

> **ກຣົມຕຳຣວດ ອອສເຕຣລຽນ ແຫ່ງ ລັດຖະບານກາງ (AFP)** – ການປະຕິບັດງານຂອງເຈົ້າໜ້າທີ່ ຂອງ AFP ແລະ ກ່ຽວກັບນະໂຍບາຍ, ການປະຕິບັດງານ ແລະ ຂັ້ນຕອນ ການເຮັດວຽກຂອງ AFP ໃນຖານະທີ່ເປັນຫ້ອງການນຶ່ງ.

> **ອຸດສາຫະກັມ ໄປສະນີ** – ກຣົມ ໄປສະນີ ອອສເຕຣເລັຍ ແລະ ບັນດາເອກກະຊົນທີ່ເປີດຫ້ອງການໄປສະນີທີ່ ໄດ້ລົງທະບຽນກັບ ໂຄງການ ອຸດສາຫະກັມໄປສະນີ ອອມບຸດສແມນ (PIO).

> **ການປະກັນພັຍສຸຂພາບ ເອກກະຊົນ** – ສະມາຊິກຂອງ ການປະກັນພັຍສຸຂພາບ, ກອງທຶນປະກັນພັຍສຸຂພາບ, ໂຮງພະຍາບານເອກກະຊົນ ຫຼື ຜູ້ທີ່ມີວິຊາຊີບທາງແພດ. ການຮ້ອງຮຽນຕ້ອງແມ່ນກ່ຽວກັບການຈັດການເລື້ອງປະ ກັນພັຍສຸຂພາບ.

> **ນັກຮຽນຈາກຕ່າງປະເທດ** – ບັນຫາທີ່ເກີດຂຶ້ນກັບນັກ ຮຽນທີ່ຈະມາຮຽນ, ນັກຮຽນໃນປັດຈຸບັນ ຫຼື ອະດີດ ນັກຮຽນທີ່ມີກັບໂຮງຮຽນເອກກະຊົນ, ວິທຍາລັຍ ແລະ ມະຫາວິທຍາລັຍ ໃນອອສເຕຣເລັຍ.

> **ອານາເຂດ ເມືອງຫຼວງ ຂອງ ອອສເຕຣເລັຍ (ACT)** – ວິທີການບໍລິຫານຂອງຫ້ອງການລັດຖະບານ ACT

## ຈະທຳການຮ້ອງຮຽນໄດ້ຢ່າງໃດ

ກ່ອນອື່ນຈົ່ງຕິດຕໍ່ຫ້ອງການທີ່ເບິ່ງແຍງ ການຮ້ອງຮຽນ ທີ່ກ່ຽວຂ້ອງເພື່ອພະຍາຍາມແກ້ບັນຫາເສັຍກ່ອນ. ຖ້າທ່ານບໍ່ມີຄວາມພໍໃຈໃນການຕອບຮັບຂອງຫ້ອງການນັ້ນ ຈົ່ງຕິດຕໍ່ຫາພວກເຮົາ.

## ຈະມີຫຍັງເກີດຂຶ້ນເມື່ອທ່ານທຳການຮ້ອງຮຽນຕໍ່ພວກເຮົາ?

ພວກເຮົາຈະພິຈາຣະນາການຮ້ອງຮຽນຂອງທ່ານຢ່າງລະມັດລະວັງ ແລະ ໄວທີ່ສຸດເທົ່າທີ່ໄວໄດ້. ພວກເຮົາອາດຈະຖາມເອົາຂໍ້ມູນເພີ້ມຕື່ມຈາກທ່ານ ເຊັ່ນວ່າ ຈົດໝາຍ ຫຼື ເອກກະສານອື່ນໆ ຫຼື ຂໍໃຫ້ທ່ານທຳການຮ້ອງຮຽນເປັນລາຍລັກອັກສອນ.

## ຕິດຕໍ່ພວກເຮົາ

### ຕາມທາງໂທຣະສັບ

ໂທຣະສັບຫາໝາຍເລກ **1300 362 072** ລະຫວ່າງ
9 ໂມງເຊົ້າ ຫາ 5 ໂມງແລງ (AEDT) ວັນຈັນ ຫາ ວັນສຸກ

### ຕາມທາງອອນລາຍ

ເປີດເຂົ້າເບິ່ງ **www.ombudsman.gov.au**

### ເປັນລາຍລັກອັກສອນ

GPO Box 442, Canberra ACT 2601

## ບໍຣິການຕ່າງໆທີ່ມີໄວ້ເພື່ອຊ່ວຍທ່ານໃນການທຳການຮ້ອງຮຽນ

ຖ້າທ່ານເປັນຜູ້ທີ່ບໍ່ປາກພາສາອັງກິດ ພວກເຮົາກໍສາມາດຊ່ວຍທ່ານໄດ້ໂດຍຜ່ານທາງ ບໍຣິການ ການແປເອກກະສານ ແລະ ແປພາສາ (TIS) ຕາມໝາຍເລກ **131 450**.
ຖ້າທ່ານມີຄວາມພິການທາງ ການໄດ້ຍິນ ທາງສາຍຕາ ຫຼືການເວົ້າ ກໍມີບໍຣິການ TTY Service ໄວ້ຊ່ວຍທ່ານໂດຍຜ່ານບໍຣິການສົ່ງຕໍ່ແຫ່ງຊາດ (National Relay Service) ຕາມໝາຍເລກ **133 677**.

**ບໍຣິການຂອງ ອອມບຸສແມນ ແມ່ນ ບໍຣິການ ຟຣີ**